ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ກົມກວດກາປ່າໄມ້

ເລກທີ ...0024.../ກກປມ.

ນະຄອນຫຼວງວຽງຈັນ,ວັນທີ...6.1.2011....

# ແຈ້ງການ

## ຂອງຫົວໜ້າກົມກວດກາປ່າໄມ້

ເຖິງ: ຫົວໜ້າກອງກວດກາປ່າໄມ້ປະຈຳແຂວງ.........................................................

ເລື່ອງ: ໃຫ້ຈັດຕັ້ງປະຕິບັດຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 4037/ກປ, ລົງວັນທີ 28/12/2010 ວ່າດ້ວຍການນຳໃຊ້ເຄື່ອງແບບ ແລະ ເຄື່ອງໝາຍຂອງເຈົ້າໜ້າທີ່ປ່າໄມ້.

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 0410/ກປ, ລົງວັນທີ 10/04/2009 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມກວດກາປ່າໄມ້.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 4037/ກປ, ລົງວັນທີ 28/12/2010 ວ່າດ້ວຍການອະນຸມັດນຳໃຊ້ເຄື່ອງແບບ ແລະ ເຄື່ອງໝາຍເຈົ້າໜ້າທີ່ກວດກາປ່າໄມ້.

### ກົມກວດກາປ່າໄມ້ຂໍຖືເປັນກຽດແຈ້ງໃຫ້ຊາບດັ່ງນີ້:

1. ການນຳໃຊ້ເຄື່ອງແບບ ແລະ ເຄື່ອງໝາຍເຈົ້າໜ້າທີ່ກວດກາປ່າໄມ້, ແມ່ນໃຫ້ປະຕິບັດ, ຕາມຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 4037/ກປ, ລົງວັນທີ 28 / 12 / 2010 ຢ່າງເຂັ້ມງວດ.
2. ສ່ວນເຄື່ອງແບບ ແລະ ເຄື່ອງໝາຍຂອງເຈົ້າໜ້າທີ່ປ່າໄມ້ ແມ່ນໃຫ້ພົວພັນຮັບເອົານຳ ກົມກວດກາປ່າໄມ້.
3. ການຕິດກາເຄື່ອງແບບ ແລະ ເຄື່ອງໝາຍຂອງເຈົ້າໜ້າທີ່ປ່າໄມ້ໃຫ້ຕິດດັ່ງນີ້:
   - ເຄື່ອງໝາຍຕິດແຂນເສື້ອ ໃຫ້ຕິດເບື້ອງຊາຍ
   - ເຄື່ອງໝາຍຕິດຄໍເສື້ອ ໃຫ້ຕິດທັງສອງຂອງຄໍເສື້ອ
   - ເຄື່ອງໝາຍຄຸນວຸດທິການສຶກສາ ໃຫ້ຕິດເທິງຖົງເສື້ອກ້ຳຊາຍ
   - ປ້າຍຊື່ ໃຫ້ຕິດເທິງຖົງເສື້ອກ້ຳຂວາ ( ລະອຽດໃຫ້ເບິ່ງຕາມແບບທີ່ຕິດຂັດມາພ້ອມນີ້ )

ສະນັ້ນ, ຈຶ່ງແຈ້ງໃຫ້ທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າກົມກວດກາປ່າໄມ້

<u>ບ່ອນສົ່ງ:</u>

| | |
|---|---|
| 1. ພະແນກກະສິກຳ ແລະ ປ່າໄມ້ແຂວງ ເພື່ອຊາບ | 1 ສະບັບ |
| 2. ເກັບມ້ຽນ | 1 ສະບັບ. |